| |
|---|
| ນະຄອນຫລວງວຽງຈັນ<br>ພະແນກໄປສະນີ,ໂທລະຄົມມະນາຄົມ<br>ແລະການສື່ສານ |
| ຂາເຂົ້າ / ເລກທີ...960...<br>ວັນທີ...13-6-13... |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ,

ໂທລະຄົມມະນາຄົມ ແລະ ການສື່ສານ

ກົມໂທລະຄົມມະນາຄົມ

ເລກທີ:...467.../ປທສ.ກທຄ

ນະຄອນຫລວງວຽງຈັນ, ວັນທີ:..3..JUN..2013

## ແຈ້ງການເພີ່ມເຕີມ

ເຖິງ : ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ອີທີແອລ ມະຫາຊົນ;

- ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ລັດວິສາຫະກິດລາວໂທລະຄົມມະນາຄົມ;
- ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ສະຕາ ໂທລະຄົມ ຈຳກັດ;
- ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ວີມເປວຄອມ ລາວ ຈຳກັດ.

ເລື່ອງ: ການຂຶ້ນທະບຽນເລກໝາຍໂທລະສັບມືຖື ແບບຕື່ມເງິນ.

- ອີງຕາມຂໍ້ຕົກລົງຂອງ ລັດຖະມົນຕີວ່າການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ: 282/ປທສ, ລົງວັນທີ: 03 ຕຸລາ 2011, ວ່າດ້ວຍ: ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມໂທລະຄົມມະນາຄົມ.
- ອີງຕາມແຈ້ງການ, ສະບັບເລກທີ: 0453/ປທສ.ຫກ, ລົງວັນທີ: 07/10/2011, ວ່າດ້ວຍ ການຂຶ້ນທະບຽນເລກໝາຍໂທລະສັບມືຖື ແບບຕື່ມເງິນ.

ເພື່ອເຮັດໃຫ້ການຄຸ້ມຄອງການນຳໃຊ້ບໍລິການໂທລະສັບມືຖືແບບຕື່ມເງິນ ໃຫ້ຖືກຕາມລະບຽບການຕ່າງໆ ແລະ ມີປະສິດທິຜົນດີຂຶ້ນກວ່າເກົ່າ.

ກົມໂທລະຄົມມະນາຄົມ, ແຈ້ງມາຍັງບັນດາ ບໍລິສັດ ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ດັ່ງນີ້:

1. ໃຫ້ບັນດາບໍລິສັດ ບໍລິການດ້ານໂທລະຄົມມະນາຄົມ ກວດກາຄືນ ເລກໝາຍໂທລະສັບມືຖືແບບຕື່ມເງິນ ທັງເລກໝາຍໂທລະສັບເກົ່າ ແລະ ເລກໝາຍເປີດນຳໃຊ້ໃໝ່ ຕ້ອງໄດ້ລົງທະບຽນຢ່າງຖືກຕ້ອງຄົບຖ້ວນ ຕາມແຈ້ງການ, ເລກທີ453/ປທສ.ຫກ, ລົງວັນທີ 7/10/2011 ຄື: ສຳລັບຜູ້ທີ່ເປີດນຳໃຊ້ເບີໂທລະສັບມືຖືແບບຕື່ມເງິນໃໝ່ ແມ່ນໃຫ້ປະກອບເອກະສານ ເພື່ອຢັ້ງຢືນການລົງທະບຽນ ມີດັ່ງ:
   - ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ
   - ໃບຢັ້ງຢືນທີ່ຢູ່
   - ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ).
2. ສຳລັບຜູ້ທີ່ໂຊກດີໄດ້ຮັບລາງວັນ ຈາກການສະສົມຄະແນນ ຫຼື ຈາກການຈັບລາງວັນຕ່າງໆ ແມ່ນ ຕ້ອງເປັນຜູ້ທີ່ໄດ້ລົງທະບຽນທີ່ຖືກຕ້ອງແລະຄົບຖ້ວນ ຈຶ່ງມອບລາງວັນໃຫ້ຜູ້ກ່ຽວ.
3. ໃຫ້ບັນດາ ບໍລິສັດບໍລິການດ້ານໂທລະຄົມ ລາຍງານຄວາມຄືບໜ້າວຽກງານດັ່ງກ່າວ ມາຍັງ ກົມໂທລະຄົມມະນາຄົມ ຢ່າງເປັນປົກກະຕິ ຂອງທຸກໆ ເດືອນ.



ກະຊວງ ປທສ, ກົມໂທລະຄົມມະນາຄົມ, ໂທ: 218897, 223041. ແຟັກ: 285259

4. ຖ້າຫາກກວດພົບເຫັນ ບໍລິສັດຜູ້ໃຫ້ບໍລິການດ້ານໂທລະຄົມ ທີ່ຍັງບໍ່ປະຕິບັດການລົງທະບຽນກ່ອນເປີດໃຫ້ນຳໃຊ້ເລກໝາຍໂທລະສັບໃໝ່ ແມ່ນຈະຖືກປັບໃໝຕາມບົດບັນທຶກກອງປະຊຸມ, ຄັ້ງວັນທີ24/5/2012 ແລະ ສັນຍາຄັ້ງວັນທີ 6/6/2012.
5. ຖ້າຫາກມີເຫດການອັນຫຍໍ້ທໍ້ຈາກການນຳໃຊ້ເລກໝາຍໂທລະສັບຂອງເຄືອຂ່າຍຂອງບໍລິສັດລັດວິສະຫະກິດໃດໜຶ່ງ ບໍລິສັດລັດວິສະຫະກິດນັ້ນ ຕ້ອງຮັບຜິດຊອບຕໍ່ເຫດການນັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າກົມໂທລະຄົມມະນາຄົມ

ະເລີນ ສີບຸນເຮືອງ

ສຳເນົາສົ່ງ:
-ຫ້ອງການ ປທສ 1 ສະບັບ ເພື່ອຮັບຊາບ
-ກົມໂທລະຄົມມະນາຄົມ 1 ສະບັບ ເພື່ອຕິດຕາມແລະກວດກາ.
-ພະແນກປທສ ແຂວງ/ນະຄອນຫຼວງ, ບ່ອນລະ1 ສະບັບ ເພື່ອຕິດຕາມ